Lao Southern Baptist Fellowship

# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 13 ມີຖຸນາ 2010 (06-13-2010)

---

## ເມື່ອສາສນາພາໃຫ້ລົ້ມເຫຼວ

**ຂໍ້ພຣະຄັມພີໃນບົດຮຽນ:** (1 ຊາມູເອນ 4:3-5,10, 20-22; 5:1-4; 6:19-21)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:**

ບົດຮຽນນີ້ກ່ຽວກັບການເສັຽຊັຍ ຂອງພວກຊາວອິສຣາເອນ ແລະການສູນຫາຍຂອງຫີບຄຳພຣະສັນຍາ ຫລັງທີ່ພວກເຂົາເຈົ້າເຂົ້າໃຈຜິດ ສລຸບຜົນວ່າຫີບຄຳພຣະສັນຍາຢູ່ນຳນັ້ນຈະຊ່ອຍໃຫ້ພວກເຂົາເຈົ້າຮັບຊັຍຊະນະ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:**

ເພາະຄົນສ່ວນຫລາຍມັກຈະໄວ້ວາງໃຈ ໃນສາສນາຫລາຍກວ່າ ໄວ້ວາງໃຈໃນພຣະເຈົ້າ.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**

ບົດຮຽນນີ້ ຈະຊ່ອຍໃຫ້ທ່ານຮັບຮູ້ການຂອບຄຸນຄວາມສົມບູນ ຄວາມບໍຣິສຸດຂອງພຣະເຈົ້າໃໝ່ ແລະສືບຕໍ່ ການອຸທິດຕົນແດ່ພຣະເຈົ້າຜູ້ຊົງພຣະຊົນຢູ່ຂຶ້ນມາໃໝ່. ການກະທຳເຫລົ່ານີ້ ຈະຊ່ອຍທ່ານໃຫ້ຜ່ານ ຄວາມເຊື່ອໃນສາສນາມາເຖິງຄວາມຈິງ ແລະເຖິງພຣະເຈົ້າຜູ້ຊົງພຣະຊົນຢູ່.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ:**

- ນຳພານັກຮຽນສົນທະນາເຣື່ອງສັນຍາລັກຂອງຄວາມໂຊກດີ ຫລື ຄວາມລ້ຳລວຍ, ເຊັ່ນໄມ້ກາງແຂນທີ່ມີຮູບພຣະເຢຊູ, ເທວະດາ, ແລະອື່ນໆ…
- ໃນການໃຊ້ສິ່ງເຫລົ່ານີ້ມີຄວາມເປັນອັນຕະລາຍຫຍັງແດ່?
- ຖ້າໃຊ້ອັນນຶ່ງໃນຈຳນວນນີ້ເດ ມີຜົນຕໍ່ຄວາມເຊື່ອຂອງພວກເຮົາບໍ່?
- ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ? ແມ່ນຫຍັງທີ່ມີຄວາມແຕກຕ່າງລະຫວ່າງການເປັນຄຣິສຕຽນຕາມສາສນາ ແລະ ການເປັນຄຣິສຕຽນດ້ວຍຄວາມເຊື່ອ?

## 1. ໄວ້ວາງໃຈໃນຜິດບ່ອນ: (1 ຊາມູເອນ 4:3-5,10)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ 1 ຊາມູເອນ 4:3-5,10
- ໃຫ້ຂຽນຄຳວ່າ "ການຍົກຍ້າຍໄປບ້ານໃໝ່" " ການມີລູກນ້ອຍ", " ການແຕ່ງງານ", ແລະ ຢູ່ໃນເກມກີລາ" ໃສ່ກະດານ. ສິ່ງທີ່ໄດ້ຂຽນລົງໄປນີ້ສະແດງເຖິງການມີໂຊກດີ ຫລືໂຊກຮ້າຍ?
- ໃຫ້ສລຸບເຣື່ອງຄວາມຂັດແຍ້ງລະຫວ່າງອິສຣາເອນ ແລະຟີລິສຕິນ.
- ແມ່ນຫຍັງທີ່ເປັນເຄື່ອງໝາຍເຖິງຄວາມເຊື່ອຂອງຊົນຊາດອິສຣາເອນ?
- ພວກອິສຣາເອນໄປເອົາຫີບຄຳໝັ້ນສັນຍາຢູ່ໃສ ເພື່ອໃຫ້ພຣະເຈົ້າສະຖິດຢູ່ກັບພວກເຂົາ?
- ພວກອິສຣາເອນພາກັນຊອກສແວງຫາພຣະເຈົ້າກ່ອນ ຫລືຊອກຫາການຊົງນຳພາຂອງພຣະອົງກ່ອນ? ຫລືເຂົາເຈົ້າໃຊ້ຫີບຄຳສັນຍາຫລັງຈາກເຂົາເຈົ້າຖືກໂຈມຕີໂດຍພວກຟີລິສຕິນ?
- ແມ່ນຫຍັງທີ່ໄດ້ສະແດງໃຫ້ທ່ານເຫັນວ່າທ່ານຄວນມີ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (1 ຊາມູເອນ 4:3-5,10)

1. ແມ່ນສິ່ງໃດທີ່ທ່ານໄດ້ເຊື່ອໄວ້ວາງໃຈຫລາຍກວ່າເຊື່ອໃນພຣະເຈົ້າ? ສິ່ງເຫລົ່ານັ້ນໄດ້ຕອບສນອງທ່ານແນວໃດແດ່?
2. ເປັນດ້ວຍເຫດໃດ ພວກເຖິງກະສຽນ- ທັງຄຣິສຕຽນຈຶ່ງຖືກຫລອກລວງໃຫ້ເອົາຄວາມເຊື່ອໄວ້ວາງໃຈໃນສິ່ງທີ່ບໍ່ແມ່ນພຣະເຈົ້າມາແທນ?
3. ພວກເຮົາຈະເຮັດແນວໃດເພື່ອໃຫ້ມີຄວາມແນ່ນອນໃຈວ່າພວກເຮົາເຊື່ອໄວ້ວາງໃຈໃນພຣະເຈົ້າ?
4. ແມ່ນຫຍັງທີ່ເປັນຜົນຕອບສນອງໃນການເຊື່ອໄວ້ວາງໃຈຜິດຂອງຊົນຊາດອິສຣາເອນ?
5. ໃນທາງໃດທີ່ເວົ້າໄດ້ວ່າ ພວກເຮົາເຊື່ອໄວ້ວາງໃຈໃນສິ່ງທີ່ບໍ່ຖືກຕ້ອງທີ່ຢູ່ອ້ອມຮອບພວກເຮົາ?

## 2. ພຣະເຈົ້າຊົງບໍ່ສະຖິດຢູ່ນຳພວກເຂົາ: (1 ຊາມູເອນ 4:20-22)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ 1 ຊາມູເອນ 4:20-22
- ພັລຍາຂອງຟີເນຮາຮູ້ໄດ້ຢ່າງໃດວ່າ ຣັສມີຂອງອົງພຣະຜູ້ເປັນເຈົ້າໄດ້ຈາກພວກອິສຣາເອນໄປ?
- ການມີເດັກນ້ອຍຄົນນີ້ໄດ້ເປັນຜົນສະທ້ອນເຖິງການຕາຍຂອງເອລີ ແລະຟີເນຮາຫຍັງແດ່?
- ການບໍ່ເຊື່ອຟັງຂອງອິສຣາເອນໄດ້ມີຜົນສະທ້ອນໄປເຖິງຊົນຊາດແນວໃດ?
- ສົນທະນາຊີວິດຂອງທ່ານເອງ ວ່າ ໃນເມື່ອທ່ານພົບກັບບັນຫາທີ່ປັສຈາກພຣະເຈົ້າ ແລະທ່ານໄດ້ຮູ້ເມື່ອຄິງແລ້ວກັບມາຫາພຣະເຈົ້າ.
- ເວົ້າ: ຂ້າພະເຈົ້າບໍ່ເຄີຍເຫັນ ຣັສມີຂອງມະນຸດຄົນໃດໃນໂລກນີ້.
- ພຣະເຈົ້າຊົງສ່ອງຣັສມີຂອງພຣະອົງເຂົ້າມາໃນພວກເຮົາ ພວກເຮົາຄວນໃຫ້ຄົນອື່ນຮູ້ວ່າພຣະອົງແມ່ນໃຜ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 1 ຊາມູເອນ 4:20-22

1. ເຮັດແນວໃດພວກເຮົາຈຶ່ງໃຫ້ຄົນອື່ນເຫັນພຣະເຈົ້າສະຖິດຢູ່ກັບພວກເຮົາ ນຳພາແລະປົກປ້ອງຄຸ້ມຄອງພວກເຮົາທຸກຍາມ?
2. ທ່ານໄດ້ເຫັນຣັສມີຂອງພຣະເຈົ້າ ແລະຊົງສະຖິດນຳພາທຸກວັນໃນຊີວິດຂອງໃຜແດ່?
3. ທ່ານຈະຮຽນຈາກຊີວິດທີ່ເປັນແບບຢ່າງຂອງຜູ້ນັ້ນແນວໃດ?

4. ໃນເມື່ອພວກເຮົາຕົກຢູ່ໃນບັນຫາຕ່າງໆ ແລະຮູ້ວ່າຣັສມີຂອງພຣະເຈົ້າບໍ່ໄດ້ຊົງຢູ່ໃນພວກເຮົາ ແລ້ວພວກເຮົາຄວນຈະເຮັດຢ່າງໃດ? ພວກເຮົາຈະນຳພາຄົນອື່ນໃຫ້ດຳຣົງຊີວິດຢູ່ໃນຣັສມີຂອງພຣະເຈົ້າໄດ້ຢ່າງໃດ?

## 3 . <u>ຖືຄວາມບໍຣິສຸດເປັນສິ່ງທັມມະດາທົ່ວໄປ:</u> (1 ຊາມູເອນ 5:1-4; 6:19-21)

- ເຮັດແນວໃດພວກເຮົາ ຈຶ່ງຈະສາມາດຮ່ວມກັນປົວແປງສິ່ງເຫລົ່ານີ້ທີ່ມັນແຕກຕ່າງໄປຈາກການທີ່ຊົງກຳນົດໄວ້ແລ້ວນັ້ນ?
- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 5:1-4; 6:19-21
- ໃຫ້ນັກຮຽນຊີ້ເຖິງແຜນທີ່ຂອງປະເທດ ຟີລິສຕິນ ແລະປະເທດອິສຣາເອນທີ່ມີຢູ່ໃນປຶ້ມພຣະຄັມພີຂອງເຂົາເຈົ້າ. ໃຫ້ສລຸບເຖິງຄວາມສັມພັນລະຫວ່າງຊົນຊາດອິສຣາເອນ ແລະຊົນຊາດຟີລິສຕິນ.
- ແມ່ນຫຍັງເກີດຂຶ້ນກັບພະດາໂກນ? ສິ່ງທີ່ເກີດຂຶ້ນນີ້ໝາຍຄວາມວ່າແນວໃດ?
- ຄົນຟີລິສຕິນໄດ້ຮຽນຮູ້ຫຍັງຈາກປະສົບການທີ່ເຂົາເຈົ້າທຳກັບຫີບພັນທະສັນຍາຂອງອົງພຣະຜູ້ເປັນເຈົ້າ?
- ຊີ້ງຊີ້ໃຫ້ເຫັນວ່າ ພວກຟີລິສຕິນຮູ້ວ່ານັ້ນເປັນຫີບພັນທະສັນຍາຂອງພຣະເຈົ້າ ແຕ່ເຂົາເຈົ້າບໍ່ຮູ້ວ່າແມ່ນພຣະເຈົ້າ ຫລືແມ່ນຣິດເດດອັນແຮງກ້າຂອງພຣະອົງ. ພວກເຮົາຈະດຳຣົງຊີວິດໃຫ້ສົມກັບພຣະວິນຍານບໍຣິສຸດຂອງພຣະເຈົ້າໄດ້ແນວໃດ? ຄວາມສັມພັນ, ການກະທຳ, ຄວາມຄິດ ແລະການຮັບໃຊ້ຂອງພວກເຮົາເດ?

## <u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> 1 ຊາມູເອນ 5:1-4;6:19-21

1. ຄວາມນັບຖື ໃຫ້ກຽດແດ່ພຣະວິນຍານບໍຣິສຸດຂອງພຣະເຈົ້າຂອງທ່ານຢູ່ໃນຣະດັບໃດ? ບ່ອນໃດທີ່ທ່ານຍັງຂາດຢູ່?
2. 1 ໂກຣິນໂທ 6:19-20 ໄດ້ເພີ້ມເຕີມຂໍ້ນີ້ແນວໃດ? ມີຂໍ້ອື່ນໃດແດ່ທີ່ຊ່ອຍໃຫ້ພວກເຮົາເຈົ້າໃຈເຖິງພຣະວິນຍານບໍຣິສຸດຂອງພຣະເຈົ້າ?
3. ພວກເຮົາຈະແນ່ໃຈໄດ້ຢ່າງໃດວ່າ ພວກເຮົາໄດ້ຍອມໃຫ້ພຣະວິນຍານບໍຣິສຸດຂອງພຣະເຈົ້າ ແລະພຣະອົງເອງ ສະຖິດຢູ່ໃນເຮົາ ຊຶ່ງບໍ່ແມ່ນສິ່ງຕ່າງໆທີ່ພຣະພຣະອົງຊົງສ້າງຂຶ້ນມາ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ລັກສະນະສາສນາ ແລະໜ້າທີ່ແມ່ນເປົ້າໝາຍຂອງພວກເຮົາເຖິງພຣະເຈົ້າ. ເປົ້າໝາຍໜ້າທີ່ເຄື່ອງໝາຍບໍ່ແມ່ນພຣະເຈົ້າ. ພວກເຮົາບໍ່ສາມາດທີ່ຈະຄວບຄຸມພຣະອົງດ້ວຍການປົງການທາງເຄື່ອງໝາຍທາງສາສນາໃດໆ.
- ຖ້າພວກເຮົາເຮັດຜິດບາບຕໍ່ພຣະເຈົ້າ, ປະຕິເສດພຣະອົງ, ແລະກະບົດຕໍ່ສູ້ພຣະອົງ, ພຣະອົງຈະຕັດສິນພິພາກສາພວກເຮົາ.
- ບັນດາຜູ້ທີ່ເຊື່ອຕ້ອງການທີ່ຈະຊອກສແວງຫາຄວາມບໍຣິສຸດຂອງພຣະເຈົ້າ ແລະຕອບສນອງດ້ວຍຄວາມໂຄຣົບຢຳເກງ.